ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມປ່າໄມ້
ພະແນກຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ

ເລກທີ 235 /ພຄບດ
ນະຄອນຫຼວງວຽງຈັນ, ວັນທີ 27 ກັນຍາ 2016

**ຮຽນ:** ທ່ານຫົວໜ້າ ກົມປ່າໄມ້

**ເລື່ອງ:** ລາຍງານຜົນກອງປະຊຸມ ກຸ່ມວິຊາການສະເພາະດ້ານໃນການຮ່າງນິຍາມຄວາມຖືກຕ້ອງ ຂອງໄມ້ທີ່ຕັດອອກ ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ບ້ານປົກປັກຮັກສາ ແລະ ພັດທະນາ ຄັ້ງທີ 1.

- ອີງຕາມ ຂໍ້ຕົກລົງຂອງກົມປ່າໄມ້ ສະບັບເລກທີ 0296/ກປມ, ລົງວັນທີ 11/02/2013 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງພະແນກຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ.
- ຂໍ້ຕົກລົງ ຂອງກົມປ່າໄມ້ ສະບັບເລກທີ 2027/ກປມ, ລົງວັນທີ 13/09/2016 ວ່າດ້ວຍການອະນຸມັດເປີດກອງປະຊຸມ ກ່ຽວກັບລະບຽບການທີ່ມີຜົນບັງຄັບໃຊ້ ໃນການຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ.

ພະແນກຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ ຂໍຖືເປັນກຽດລາຍງານໃຫ້ທ່ານຊາບວ່າ: ໃນລະຫວ່າງວັນທີ 19-20/09/2016 ພະແນກຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ ໄດ້ເປີດກອງປະຊຸມ ກຸ່ມວິຊາການສະເພາະດ້ານ ກ່ຽວກັບການ ຮ່າງນິຍາມຄວາມຖືກຕ້ອງຂອງໄມ້ ທີ່ຕັດອອກ ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ບ້ານປົກປັກຮັກສາ ແລະ ພັດທະນາ ຄັ້ງທີ 1 ຂຶ້ນ ໂດຍການເປັນປະທານຂອງທ່ານປອ. ອຸປະກອນ ອາລຸນສະຫວັດ ຫົວໜ້າພະແນກຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ ແລະ ມີຜູ້ເຂົ້າຮ່ວມຈາກ ພະແນກ, ກອງ, ຫ້ອງການ ແລະ ສູນ ຂຶ້ນກັບກົມປ່າໄມ້, ຂະແໜງປ່າໄມ້ນະຄອນຫລວງວຽງຈັນ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງສັງທອງ, ອົງການຈັດຕັ້ງທາງສັງຄົມ ແລະ ອື່ນໆ 24 ທ່ານ , ຍິງ 04 ທ່ານ *(ລະອຽດມີໃບລົງທະບຽນຄັດຕິດມາພ້ອມ).* ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນແນໃສ່ສ້າງຄວາມພ້ອມ ແລະ ຄວາມເຂົ້າໃຈເປັນເອກກະພາບກ່ຽວກັບນະໂຍບາຍຂອງລັດຖະບານໃນການຄຸ້ມຄອງປ່າໄມ້ຂັ້ນບ້ານ ແລະ ຄວາມຈຳເປັນໃນການສ້າງນິຍາມຄວາມຖືກຕ້ອງຂອງໄມ້.

ກອງປະຊຸມໄດ້ຮັບຟັງ ການສະເໜີ ຜົນການທົບທວນຄືນ ນະໂຍບາຍຂອງລັດຖະບານ ກ່ຽວກັບການຄຸ້ມຄອງປ່າໄມ້ຂັ້ນບ້ານ ແຕ່ປີ 1979 ຫາ ປະຈຸບັນ, ນິຕິກຳທີ່ກ່ຽວຂ້ອງກັບການຕັດໄມ້ທຳມະຊາດ ຈາກ ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ບ້ານປົກປັກຮັກສາ ແລະ ພັດທະນາ, ຫລັກຖານສ້າງນິຍາມຄວາມຖືກຕ້ອງຂອງໄມ້, ສິດ ແລະ ໜ້າທີ່ຂອງບ້ານໃນການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ ແລະ ເອກກະສານອື່ນໆ (ລາຍລະອຽດມີວາລະ ແລະ ເອກກະສານກອງປະຊຸມຕິດຄັດ). ຜ່ານການຮັບຟັງການສະເໜີເອກກະສານຕ່າງໆ, ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ປຶກສາຫາລື ແລະ ຮັບຮູ້ເປັນເອກກະພາບກັນດັ່ງນີ້:

1. ການນິຍາມຄວາມຖືກຕ້ອງຂອງໄມ້ ທຳມະຊາດທີ່ຕັດອອກ ຈາກເຂດຄຸ້ມຄອງຂອງບ້ານ ແມ່ນນຶ່ງໃນ 5 ແຫລ່ງທີ່ມາຂອງໄມ້ໃນ ລາວ (ໄມ້ຈາກປ່າຜະລິດ, ຈາກເຂດພັດທະນາໂຄງລ່າງ, ຈາກສວນປູກໄມ້, ໄມ້ນຳເຂົ້າ, ແລະ ຈາກປ່າຊົມໃຊ້ຂອງບ້ານ) ແມ່ນພະແນກຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ ສົມທົບກັບຂະແໜງການຂອງລັດ, ອົງການຈັດຕັ້ງທາງສັງຄົມ (CSO), ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs) ຊຶ່ງເອີ້ນວ່າ "ກຸ່ມວິຊາການປ່າໄມ້ບ້ານ" ເປັນຜູ້ຄົ້ນຄ້ວາ ແລະ ຮັບຜິດຊອບໃນການຮ່າງນິຍາມ ແລະ ໂຄງການ "Pro-FLEGT) ຕອບສະໜອງ ງົບປະມານ ຈຳນວນ 115,944,000 ລ້ານກີບ.

2. ຄວາມຈຳເປັນໃນການຮ່າງນິຍາມ ເພື່ອປະກອບສ່ວນໃນການປະຕິບັດພັນທະຂອງສາກົນ ແລະ ພາກພື້ນ ທີ່ລັດຖະບານເປັນພາຄີ ໂດຍສະເພາະແມ່ນການຄຸ້ມຄອງປ່າໄມ້ໃຫ້ຍືນນານ, ການຄ້າ-ຂາຍໄມ້ແບບສະມັກໃຈກັບສະຫະພາບ ເອີລົບ. ນອກຈາກນັ້ນ, ກໍມີຄວາມຈຳເປັນໃນການຄຸ້ມຄອງປ່າໄມ້ຂັ້ນບ້ານໃຫ້ເຂົ້າສູ່ລະບຽບກົດໝາຍ.
3. ນະໂຍບາຍປ່າໄມ້ຂອງລັດຖະບານແຕ່ລະໄລຍະແມ່ນເຫັນໄດ້ຄວາມສຳຄັນ ຂອງບ້ານໃນການປົກປັກຮັກສາຊັບພະຍາກອນປ່າໄມ້. ລັດຖະບານເອົາບ້ານເປັນພື້ນຖານໃນການປົກປັກຮັກສາປ່າໄມ້ ເລີ່ມແຕ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ ຄັ້ງທີ 2, ການຄຸ້ມຄອງທີ່ດິນ ແລະ ປ່າໄມ້ຂັ້ນບ້ານ ແມ່ນ 1 ໃນ 9 ນະໂຍບາຍ ທີ່ໄດ້ກຳນົດໃນຍຸດທະສາດປ່າໄມ້ 2020. ສິດ ແລະ ໜ້າທີ່ຂອງປ່າໄມ້ບ້ານ ໄດ້ກຳນົດ ໃນກົດໝາຍປ່າໄມ້ ມາດຕາ 108.
4. ການຕັດໄມ້ທຳມະຊາດທີ່ປະຊາຊົນສາມາດຕັດໃນເຂດຄຸ້ມຄອງຂອງບ້ານ ປະກອບມີ: ໄມ້ເຂດປ່າຊົມໃຊ້ຂອງບ້ານ ທີ່ໄດ້ຜ່ານການຈັດສັນທີ່ດິນ ແລະ ມອບດິນມອບປ່າຂັ້ນບ້ານຕາມລະບຽບການ, ເຂດຄຸ້ມຄອງນຳໃຊ້ໃນປ່າປ້ອງກັນ ແລະ ປ່າສະຫງວນ, ເຂດທີ່ສາມາດຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງຕາມແຜນຈັດສັນ ໃນປ່າຜະລິດ, ໄມ້ທຳມະຊາດທີ່ເກີດຕາມດິນນາ ແລະ ດິນສວນຂອງປະຊາຊົນ ທີ່ລັດໄດ້ມອບສິດນຳໃຊ້ຢ່າງຖືກຕ້ອງ.
5. ຂອບເຂດການນິຍາມ ຈະບໍ່ຈຳກັດແຕ່ເຂດປ່າຊົມໃຊ້ຂອງບ້ານເທົ່ານັ້ນ ຄວນກວມເອົາໄມ້ທຳມະຊາດ ທີ່ເກີດຕາມດິນນາ, ດິນສວນ, ແລະ ຄັງລ້ຽງສັດຂອງປະຊາຊົນ. ສະນັ້ນ ກອງປະຊຸມເຫັນດີໃສ່ຊື່ *"ນິຍາມຄວາມຖືກຕ້ອງຂອງໄມ້ທຳມະຊາດທີ່ຕັດອອກຈາກເຂດຄຸ້ມຄອງຂອງບ້ານ"*
6. ຄວາມເຂົ້າໃຈຄຳວ່າ ປ່າໄມ້ບ້ານ ຍັງບໍ່ເປັນເອກກະພາບ ຄວນມີການອະທິບາຍຄຳຊັບໃຫ້ແຈ້ງ. ນິຍາມປ່າໄມ້ບ້ານ ໄດ້ລະບຸໃນ ມາດຕາ 2 ຂອງລະບຽບການ 0535/ກປ.2001 ວ່າດ້ວຍລະບຽບການຄຸ້ມຄອງປ່າໄມ້ບ້ານ ຊຶ່ງໝາຍເຖິງ *"ເນື້ອທີ່ປ່າໄມ້ໃດນຶ່ງຊຶ່ງຖືກກຳນົດຂຶ້ນ ພາຍຫລັງທີ່ມີການມອບດິນ-ມອບປ່າແລ້ວ ໂດຍລັດໄດ້ມອບໃຫ້ບ້ານເປັນຜູ້ຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ຢ່າງມີແຜນການ ເພື່ອພັດທະນາປ່າໄມ້ບ້ານໃຫ້ມີຄວາມອຸດົມສົມບູນຕະຫລອດໄປ..."* ຕໍ່ບັນຫາ ນິຍາມກ່ຽວກັບປ່າໄມ້ບ້ານ ພະແນກຄຸ້ມຄອງປ່າໄມ້ບ້ານ ແລະ ເຄື່ອງປ່າຂອງດົງ ຈະນຳໄປທົບທວນຄືນຕື່ມ ແລ້ວຈະສະເໜີກອງປະຊຸມຄັ້ງຕໍ່ໄປ.
7. ຂອບເຂດ ການຄຸ້ມຄອງປ່າໄມ້ບ້ານ ຄວນດຳເນີນໃນທຸກປະເພດປ່າ (ປ່າປ້ອງກັນ, ປ່າສະຫງວນ, ປ່າຜະລິດ ແລະ ເຂດທີ່ບໍ່ທັນໄດ້ກຳນົດເຂົ້າໃນສາມປະເພດປ່າ) ໂດຍອີງໃສ່ ມາດຕາ 82 ຂອງກົດໝາຍປ່າໄມ້ ໃນການຈັດຕັ້ງປະຕິບັດ.
8. ການຄຸ້ມຄອງປ່າໄມ້ບ້ານ ຕາມມາດຕາ 82 ຂອງກົດໝາຍປ່າໄມ້ ຈະຕ້ອງໄດ້ຜ່ານການຈັດສັນທີ່ດິນ ມອບດິນ-ມອບປ່າຂັ້ນບ້ານ. ແຕ່ຂໍ້ມູນດັ່ງກ່າວແຕ່ລະບ້ານບໍ່ໄດ້ເກັບຮັກສາ. ບັນຫາດັ່ງກ່າວເປັນສິ່ງທ້າທາຍໃນການນິຍາມຄວາມຖືກຕ້ອງຂອງໄມ້ ທີ່ຕັດຈາກປ່າໄມ້ບ້ານ.
9. **ແຜນການຕໍ່ໜ້າ**

ຈະໄດ້ຈັດກອງປະຊຸມ ກຸ່ມວິຊາການສະເພາະດ້ານ ກ່ຽວກັບການ ຮ່າງນິຍາມຄວາມຖືກຕ້ອງຂອງໄມ້ ທີ່ຕັດອອກປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ບ້ານປົກປັກຮັກສາ ແລະ ພັດທະນາ ຄັ້ງທີ 2 ໃນກາງເດືອນ ຕຸລາ 2016. ສ່ວນຈຸດປະສົງ ແລະ ວາລະກອງປະຊຸມ ຈະແຈ້ງໃຫ້ຊະມາຊິກກຸ່ມຕາມພາຍຫລັງ.

ດັ່ງນັ້ນ, ຈຶ່ງສະເໜີລາຍງານມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດດ້ວຍ.

ຮ ຫົວໜ້າ ພະແນກ

ຄຳແຫວນ ແກ້ວມະນີວົງ